ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214 013-14
ແຟັກ: 213 495

ເລກທີ 1004 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 06 FEB 2019

# ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ບໍລິສັດ, ຫ້າງຮ້ານ ແລະ ພໍ່ແມ່ປະຊາຊົນໃນທົ່ວປະເທດ

**ເລື່ອງ:** ຫ້າມບໍລິໂພກ ແລະ ຈຳໜ່າຍ ຜະລິດຕະພັນອາຫານເສີມຜິດກົດໝາຍ 133 ລາຍການ.

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ເລກທີ 33/ສພຊ, ລົງວັນທີ 24/07/2013;
- ອີງຕາມ ປະກາດສຳນັກງານຄະນະກຳມະການອາຫານ ແລະ ຢາໄທ, ເລື່ອງປະກາດຜົນກວດພິສູດອາຫານ ສະບັບຂອງປີ 2017-2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມອາຫານ ແລະ ຢາ, ເລກທີ 1598/ສທ, ລົງວັນທີ 14/06/2016.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານກ່ຽວກັບ ຜະລິດຕະພັນອາຫານເສີມທີ່ບໍ່ປອດໄພ, ບໍ່ບັນລຸມາດຕະຖານ ແລະ ບັນຈຸສານຕ້ອງຫ້າມ 133 ລາຍການ ທີ່ອົງການອາຫານ ແລະ ຢາ ປະເທດໄທໄດ້ປະກາດດັ່ງລຸ່ມນີ້:

1, ໝວດຜະລິດຕະພັນອາຫານເສີມ ອວດອ້າງສັບພະຄຸນ ຫຼຸດນ້ຳໜັກ ຈຳນວນ 86 ລາຍການ;

2, ໝວດຜະລິດຕະພັນອາຫານເສີມ ອວດອ້າງສັບພະຄຸນ ເສີມສະມັດຕະພາບທາງເພດ ແລະ ເສີມໜ້າເອິກ ຈຳນວນ 21 ລາຍການ;

3, ໝວດຜະລິດຕະພັນອາຫານເສີມ ອວດອ້າງສັບພະຄຸນ ເຮັດໃຫ້ຜິວຂາວນວນ ຈຳນວນ 26 ລາຍການ.

ຜະລິດຕະພັນອາຫານດັ່ງກ່າວ ແມ່ນກວດພົບສານທີ່ຫ້າມໃສ່ໃນອາຫານ ເຊັ່ນ: Sibutramine, Sildenafil, Hormone...; ນອກນັ້ນ, ແມ່ນມີການກ່າວອ້າງ ແລະ ໂຄສະນາ ສັບພະຄຸນເກີນຄວາມຈິງ ຊຶ່ງເຮັດໃຫ້ເປັນອັນຕະລາຍຕໍ່ສຸຂະພາບ (ລາຍຊື່ຜະລິດຕະພັນອາຫານເສີມ ແມ່ນຕິດຄັດເອກະສານ).

ສະນັ້ນ, ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງທ່ານ ຫ້າມບໍລິໂພກ, ຈຳໜ່າຍ ຜະລິດຕະພັນດັ່ງກ່າວ; ຖ້າຫາກເຈົ້າໜ້າທີ່ອາຫານ ແລະ ຢາ ພົບເຫັນແມ່ນ ຈະໄດ້ ອາຍັດ, ຍຶດ ແລະ ຖືກປະຕິບັດມາດຕະການ ຕາມກົດໝາຍວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງວັນທີ 24/07/2013. ກົມອາຫານ ແລະ ຢາ ສະເໜີໃຫ້ພະແນກສາທາລະນະສຸກແຂວງ ແລະ

ນະຄອນຫຼວງ ຊີ້ນຳນຳພາຂະແໜງອາຫານ ແລະ ຢາ ແຂວງ ແລະ ນະຄອນຫຼວງ ລົງຕິດຕາມກວດກາຢູ່ດ່ານນຳເຂົ້າ ແລະ ໃນທ້ອງຕະຫຼາດໃຫ້ທົ່ວເຖິງ ແລະ ເຂັ້ມງວດ. ຖ້າກວດພົບຜະລິດຕະພັນດັ່ງກ່າວແມ່ນໃຫ້ ອາຍັດ, ຢຶດ ແລະ ປະຕິບັດມາດຕະການຕາມທີ່ໄດ້ກຳນົດໃນລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

**ດຣ. ສົມທະວີ ຈາງວີລົມມິດ**